## <u>ຂໍ້ມູນສຳຄັນກ່ຽວກັບການຄຸ້ມຄອງ MEDICAID ຂອງທ່ານ</u>

**ກະລຸນາປະຕິບັດທັນທີ**

ພວກເຮົາກຳລັງຂຽນດ້ວຍຂໍ້ມູນທີ່ສຳຄັນກ່ຽວກັບເງິນຊ່ວຍເຫຼືອດ້ານສຸຂະພາບຂອງ Medicaid ຂອງທ່ານ. ຕາມທີ່ກົດໝາຍລັດຖະບານກາງກຳນົດ, ລັດໂຣດໄອແລນກຳລັງດຳເນີນການຕໍ່ອາຍຸການມີສິດໄດ້ຮັບ Medicaid ເພື່ອຢືນຢັນວ່າທຸກຄົນທີ່ຢູ່ໃນ Medicaid ຍັງມີສິດໄດ້ຮັບ. ບັນທຶກຂອງພວກເຮົາຊີ້ໃຫ້ເຫັນວ່າທ່ານມີສະຖານະການພິເສດທີ່ສົ່ງຜົນກະທົບຕໍ່ການມີສິດທີໄດ້ຮັບຂອງທ່ານ.

### <u>ການຄຸ້ມຄອງ Medicaid ຂອງທ່ານກຳລັງສິ້ນສຸດລົງ</u>

ຂໍ້ມູນທີ່ພວກເຮົາມີໄດ້ຊີ້ໃຫ້ເຫັນວ່າທ່ານບໍ່ມີສິດໄດ້ຮັບ Medicaid ເນື່ອງຈາກສະຖານະການເຂົ້າເມືອງຂອງທ່ານ. ພວກເຮົາໄດ້ພະຍາຍາມກວດສອບສະຖານະການເຂົ້າເມືອງຂອງທ່ານຜ່ານແຫຼ່ງທີ່ມີຢູ່ຂອງພວກເຮົາແລ້ວ, ແຕ່ພວກເຮົາບໍ່ສາມາດຢືນຢັນສະຖານະຂອງທ່ານໄດ້. ພວກເຮົາບໍ່ມີເອກະສານທີ່ພວກເຮົາຈຳເປັນຕ້ອງການເພື່ອເຂົ້າໄປເບິ່ງວ່າທ່ານມີສິດໄດ້ຮັບການຄຸ້ມຄອງ ຫຼື ບໍ່.

### <u>ວິທີການຮູ້ວ່າທ່ານສາມາດຢູ່ໃນ Medicaid ໄດ້</u>

ຖ້າທ່ານຕ້ອງການທີ່ຈະໄດ້ຮັບການຄຸ້ມຄອງຈາກ Medicaid, ກະລຸນາໃຫ້ເອກະສານທີ່ພວກເຮົາຕ້ອງການເພື່ອພິຈາລະນາການມີສິດໄດ້ຮັບ Medicaid ຂອງທ່ານ. ທ່ານສາມາດຊອກຫາຂໍ້ມູນເພີ່ມເຕີມກ່ຽວກັບເອກະສານທີ່ພວກເຮົາຕ້ອງການໄດ້ໂດຍ:

- ເຂົ້າສູ່ລະບົບບັນຊີຂອງທ່ານທີ່ www.healthyrhode.ri.gov. My Dashboard (ແດສບອດຂອງຂ້ອຍ) ຈະສະແດງເອກະສານທີ່ທ່ານຕ້ອງໃຫ້.
- ຕິດຕໍ່ພະແນກບໍລິການມະນຸດຂອງລັດ ໂຣດໄອແລນ (Department of Human Services, DHS) ທີ່ເບີ 1-855-697-4347.

ຢ່າຊັກຊ້າ. ກະລຸນາກວດເບິ່ງເອກະສານຂອງທ່ານ ແລະ ໃຫ້ຂໍ້ມູນປັບປຸງໃນທັນທີ ເພື່ອໃຫ້ພວກເຮົາສາມາດພິຈາລະນາວ່າທ່ານມີສິດທີ່ຈະຢູ່ພາຍໃຕ້ການຄຸ້ມຄອງ ຫຼື ບໍ່.

**ສິ່ງທີ່ທ່ານສາມາດເຮັດໄດ້ຖ້າທ່ານບໍ່ມີສິດໄດ້ຮັບ Medicaid ອີກຕໍ່ໄປ**

ຖ້າທ່ານອາໄສຢູ່ໃນສະຫະລັດຢ່າງຖືກຕ້ອງຕາມກົດໝາຍ ແລະ ມີເງື່ອນໄຂກົງຕາມຂໍ້ກຳນົດມີສິດໄດ້ຮັບສະຖານະພາບຄົນເຂົ້າເມືອງ, ທ່ານອາດມີທາງເລືອກອື່ນຢູ່ໃນການໄດ້ຮັບຄວາມຄຸ້ມຄອງຜ່ານ HealthSource RI (HSRI). ໂທຫາ HSRI ຈາກ 8 ໂມງເຊົ້າ ເຖິງ 6 ໂມງແລງ ໃນວັນເຮັດວຽກທີ່ 1-855-840-4774 ເພື່ອລົມກັບຜູ້ໃດຜູ້ໜຶ່ງ ທີ່ສາມາດຊ່ວຍທ່ານໄດ້.

ຖ້າທ່ານບໍ່ເຫັນດີກັບການຕັດສິນໃຈຂອງພວກເຮົາກ່ຽວກັບເງິນຊ່ວຍເຫຼືອຂອງທ່ານ, ທ່ານກໍສາມາດຂໍອຸທອນໂດຍປະຕິບັດຕາມຂັ້ນຕອນທີ່ໄດ້ອະທິບາຍໄວ້ໃນແຈ້ງການຕັດສິນໃຈເງິນຊ່ວຍເຫຼືອ (Benefits Decision Notice) ຂອງທ່ານ.

ເຂົ້າເບິ່ງ www.staycovered.ri.gov ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການມີສິດໄດ້ຮັບ Medicaid ແລະ ວິທີການຊອກຫາຄວາມຊ່ວຍເຫຼືອ.